ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0328/25 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 13 ສິງຫາ 2025

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 5/2025, ທີ່ຈັດຂຶ້ນໃນວັນທີ 7 ສິງຫາ2025

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 5/2025, ທີ່ຈັດຂຶ້ນໃນວັນທີ 7 ສິງຫາ 2025 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນ ດັ່ງນີ້:

1. ອະນຸມັດງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ແລະ ງົບກຳໄລຂາດທຶນສຳເລັດ) ແລະ ງວດ 6 ເດືອນຕົ້ນປີ 2025 ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກແລ້ວ ເພື່ອເປີດເຜີຍສູ່ສາທາລະນະຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ.
2. ອະນຸມັດແຜນບໍລິຫານຄວາມສ່ຽງ ແລະ ຮັບຊາບການຕິດຕາມຄວາມສ່ຽງໃນຊ່ວງ 6 ເດືອນທຳອິດທີ່ຜ່ານມາ .
3. ພິຈາລະນາປັບປຸງເງື່ອນໄຂ Credit Criteria ຂອງການໃຫ້ບໍລິການເຊົ່າຊື້ສຳຫຼັບຜະລິດຕະພັນທີ່ໃຫ້ບໍລິການໃນປັດຈຸບັນ.
    1. ລົດຈັກໃໝ່
    2. ລົດຈັກມືສອງ - ຮ້ານຄ້າ
    3. ລົດຈັກມືສອງ - ບຸກຄົນ (ບໍລິການສິນເຊື່ອລົດຈັກຄືນໃໝ່)
    4. ລົດໄຖນາປະເພດຍ່ຳໆ
    5. ຄຳ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ນາງ ຕຣີລິດວິໄລ)